**ແຜນການສອນ**

# ບົດຮຽນໂຮງຮຽນວັນອາທິດ

## ວັນອາທິດ ທີ 9 ພຶສຈິກາ 2008 (11-09-2008)

---

## ຢ່າເຮັດຕາມຝ່າຍໂລກ, ແຕ່ໃຫ້ມີການປ່ຽນແປງ:

**ຂໍ້ພຣະຄັມພີໃນບົດຮຽນ**: (ໂຣມ 12:1-8, 14-21)

**ບົດຮຽນນີ້ເວົ້າກ່ຽວກັບຫຍັງ?:** ທ່ານໂປໂລໄດ້ສອນວ່າຕາມຄວາມເມດຕາຂອງພຣະເຈົ້າຕໍ່ຜູ້ທີ່ເຊື່ອທັງຫລາຍຄວນມີການປ່ຽນແປງເພື່ອເຂົ້າໃນການຖວາຍຕົວ, ຕິດຕາມພຣະເຢຊູຄຣິດຜູ້ຊຶ່ງທຳຄວາມດີຕໍ່ທຸກຄົນດ້ວຍການຖ່ອມຕົວ.

**ເປັນຫຍັງບົດຮຽນນີ້ຈຶ່ງສຳຄັນ?:** ມີຜູ້ໃຫຍ່ຫລາຍຄົນທີ່ບໍ່ໄດ້ມີຄວາມຜູກພັນຢູ່ກັບພຣະທັມຄຳສອນຂອງອົງພຣະຜູ້ເປັນເຈົ້າປະຈຳວັນ, ຢູ່ໃນທີ່ທຳງານ ແລະຢູ່ໃນໂບດການດຳເນີນຊີວິຂອງເຂົາເຈົ້າກໍແຕກຕ່າງຫລາຍ. ຣະບົບການດຳເນີນຊີວິດຂອງເຂົາເຈົ້າໄດ້ປ່ຽນວັນອາທິດມາເປັນວັນຈັນ. ຂາດການສັມພັນກັບພຣະເຈົ້າ ນີ້ເປັນຄວາມຈິງຊຶ່ງເປັນຢູ່ຢ່າງນັ້ນມັນເປັນອັນຕລາຍຫລາຍ. ບົດຮຽນນີ້ຈະຊ່ອຍໃຫ້ທ່ານສ້າງຄວາມຜູກພັນກັບພຣະທັມຄຳສອນໃຫ້ດຳເນີນຊີວິດຕາມແບບແຜນຂອງທ່ານໃນໂລກນີ້ໃຫ້ຖືກຕ້ອງ ໂດຍການຖວາຍຕົວ, ການຖ່ອມຕົວ ແລະກ້ວຍຄວາມຮັກ.

**ບົດຮຽນນີ້ສາມາດມີຜົນສະທ້ອນຕໍ່ຊີວິດຂອງທ່ານຢ່າງໃດ?:**

ບົດຮຽນນີ້ຈະຊ່ອຍໃຫ້ທ່ານດຳເນີນຊີວິດຄຣິສຕຽນໂດຍການອຸທິດຖວາຍຕົວໃຫ້ກັບພຣະເຈົ້າ, ມີຊີວິດຢູ່ຢ່າງອ່ອນນ້ອມຖ່ອມຕົວ ແລະທຳການດີຕໍ່ທຸກ ໆ ຄົນທັງຄົນທີ່ເປັນມິດ ແລະເປັນສັຕຣູໄດ້.

**ການຈັດຕຽມ ແລະແຜນການສອນຂອງຄຣູ:**

1. ອະທິຖານຂໍການຊົງນຳຈາກພຣະວິນຍານບໍຣິສຸດ ກ່ອນສິ່ງອື່ນໝົດ.
2. ສຶກສາຂໍ້ພຣະຄັມພີທີ່ຈະໃຊ້ໃນບົດຮຽນນີ້.
3. ຖາມລົ້ມຄວາມຊົງຈຳຂອງນັກຮຽນໃນບົດຮຽນອາທິດແລ້ວນີ້.
4. ອ່ານ ແຜນການສອນ ໝາຍບ່ອນສຳຄັນ, ປັບປຸງ, ແກ້ໄຂ, ຈົດບັນທຶກ ແລະ ອື່ນໆ……..
5. ແຈກຢາຍບົດຮຽນໃຫ້ນັກຮຽນທຸກຄົນ

**ແນະນຳ**: - ທ້າທາຍໃຫ້ນັກຮຽນມີຄວາມນຶກເຖິງການດຳຣົງຊີວິດຄຣິສຕຽນຂອງເຂົາເຈົ້າວ່າ ເຂົາເຈົ້າເອງດຳເນີນຊີວິດຄຣິສຕຽນຢູ່ທຸກເວລາ ຫລືບໍ່ ຫລືເປັນພຽງບາງຄັ້ງບາງຄາວເທົ່ານັ້ນ. ຜູ້ທີ່ເຊື່ອໄດ້ຮັບຊີວິດແຫ່ງຄວາມລອດພົ້ນຕລອດໄປເປັນນິດໂດຍພຣະເຈົ້າໄດ້ຊົງຕັ້ງໄວ້. ຄຣິສຕຽນທຸກຄົນໄດ້ຮັບຂອງປະທານ ແລະການອວຍພຣະພອນເປັນຂອງທັມມະດາ, ແຕ່ບາງເທື່ອພວກເຮົາກໍບໍ່ໄດ້ປະຕິບັດສົມກັບຖານະທີ່ເປັນຜູ້ທີ່ເຊື່ອເລີຍ.

- ແຕ້ມຕົວຢ່າງຂນາດຂອງຄວາມຮູ້ສຶກຝ່າຍເບື້ອງເທິງ ກັບຜູ້ທີ່ມີຄວາມຝຶກຝົນຂອງຜູ້ທີ່ໄດ້ຮັບຄວາມລອດພົ້ນໃນພຣະຄຣິດ ແຕ່ບໍ່ໄດ້ດຳເນີນຊີວິດທີ່ປ່ຽນແປງ, ແຕ່ດຳເນີນຊີວິດຕາມແບບຢ່າງມະນຸດທັມມະດາຢູ່ທຸກປະ

ການ. ບົດຮຽນໃນມື້ນີ້ມີສາມໃຈຄວາມທີ່ຈະຊີ້ໃຫ້ເຫັນຫົນທາງແຫ່ງຄວວາມແຕກຕ່າງຂອງການດຳເນີນຊີວິດທີ່ປ່ຽນແປງ.

1. ***ການຖວາຍຕົວ***:  (ໂຣມ 12:1-2)

- ຂໍໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານ ພຣະທັມ ໂຣມ 12:1-2
- ໃນຂໍ້ທີ (1) ທີ່ເລີ້ມຕົ້ນໃນການສຳແດງໃຫ້ພວກເຮົາເຫັນເຖິງຄວາມລອດພົ້ນຂອງພວກເຮົາວ່າ ຜ່ານທາງຄວາມເຊື່ອ ຊຶ່ງບໍ່ແມ່ນຢ່າງອື່ນມາເຈືອປົນຫລືປ່ຽນແປງ, ແຕ່ການປ່ຽນແປງນັ້ນໝາຍຄວາມວ່າ ຮ່າງກາຍຂອງພວກເຮົາທັງໝົດຄວນຈະສະທ້ອນໃຫ້ເຫັນເຖິງຄວາມຈິງຮັກພັກດີຕໍ່ພຣະຄຣິດ.
- ແມ່ນຫຍັງທີ່ພວກເຮົາຄວນກະທຳໃຫ້ສົມກັບຖານະທີ່ພວກເຮົາຖືກປ່ຽນແປງແລ້ວ?
- ນຳພານັກຮຽນໄປສຶກສາເບິ່ງຂໍ້ທີ (2) ວ່າ: ໃນເມື່ອພວກເຮົາຖືກປ່ຽນແປງ ແລ້ວ ມີຫຍັງເກີດຂຶ້ນໃນຄວາມຄິດຂອງພວກເຮົາ?

**<u>ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະຄັມພີ:</u>**  (ໂຣມ 12:1-2)

1. ຄວາແຕກຕ່າງລະຫວ່າງຍອມອຸທິດ ແລະດຳເນີນຊີວິດຢູ່ດ້ວຍການອຸທິດຕົນນັ້ນຄືແນວໃດ? ພວກເຮົາຈະປະພຶດຕົນຢ່າງໃດເພື່ອໃຫ້ຄົນອື່ນເຫັນວ່າພວກເຮົາດຳເນີນຊີວິດທີ່ສົມກັບເປັນຜູ້ທີ່ປ່ຽນແປງແລ້ວ?
2. ດັ່ງໃນຂໍ້ພຣະທັມເຫລົ່ານີ້, ແມ່ນຄວາມຮັກຄວາມເມດຕາຂອງພຣະເຈົ້າທີ່ສຳແດງອອກທາງການດຳເນີນຊີວິດຂອງພວກເຮົາໂດຍທາງການດຳເນີນຊີວິດທີ່ມີການອຸທິດຕົວຂອງພວກເຮົານັ້ນແມ່ນຫຍັງ?  ທ່ານສາມາດແບ່ງປັນກັບຄົນອື່ນວ່າພຣະເຈົ້າມີຄວາມເມດຕາຢ່າງໃດໃນຊີວິດຂອງທ່ານຢ່າງໃດໄດ້ບໍ່ໃນອາທິດນີ້?
3. ພວກເຮົາຈະເຮັດແນວໃດເພື່ອສືບຕໍ່ຊີວິດທີ່ມີການປ່ຽນແປງຢູ່ໃນຄວາມຄິດຂອງພວກເຮົາ?

**2. <u>ຢູ່ດ້ວຍການຖ່ອມຕົວເປັນສິ່ງສຳຄັນ:</u>**  (ໂຣມ 12:3-8)

- ໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານ ພຣະທັມ  ໂຣມ 12:3-8
- ແນະນຳນັກຮຽນໃຫ້ເອົາໃຈໃສ່ໃນຂໍ້ 3-4,  ຊີ້ແຈງເຖິງປໂຍກທີ່ວ່າ “ເກີນກວ່າທີ່ເຂົາເຈົ້າໄດ້ຄິດເອົາໄວ້“ ປໂຍກນີ້ບໍ່ແມ່ນໃຫ້ພວກເຮົາຄິດຕ່ຳ ໆໃສ່ຕົວຂອງພວກເຮົາເອງ, ແຕ່ພວກເຮົາຕ້ອງເຂົ້າໃຈວາງຕົວໃຫ້ຖືກຕ້ອງເໝາະສົມກັບຣາຊອານາຈັກຂອງພຣະເຈົ້າ.
- ໃຫ້ແຕ້ມເປັນບ໊ອກໃສ່ກະດານ ແລ້ວຂຽນ “ພຣະເຈົ້າໃສ່ເທິງບ໊ອກນັ້ນ ແລ້ວຂຽນ “ບໍ່ມີຄຸນຄ່າ“ ໃສ່ທາງກ້ອງບ໊ອກ ແລະທາງກາງບ໊ອກໃຫ້ຂຽນ “ພວກເຮົາ“ ໃສ່ ແລ້ວນຳພານັກຮຽນສົນທະນາວ່າ  ເຮັດແນວໃດພວກເຮົາຈະເຫັນການປ່ຽນແປງຂອງພວກເຮົາວ່າຖືກຕ້ອງ ແລະມີຄຸນຄ່າສູງສຳລັບພຣະເຈົ້າ; ຊຶ່ງພວກເຮົາຍັງຢູ່ຫ່າງໄກຈາກຄວາມດີ ແລະກຽດຕິຍົດຂອງພຣະອົງ ແຕ່ຄຸນຄ່ານັ້ນບໍ່ໄດ້ຢູ່ໄກຈາກພວກເຮົາ.
- ໃຫ້ນັກຮຽນສເນີເຫດຜົນມາວ່າເປັນຫຍັງພຣະເຈົ້າຈຶ່ງຊອບພຣະທັຍໃນພວກເຮົາ ໂດຍພຣະເຈົ້າໃຫ້ຫລັກຖານແກ່ພວກເຮົາ (ຄວາມຈິງ, ພວກເຮົາຖືກສ້າງຂຶ້ນມາຕາມພຣະສາຍາຂອງພຣະອົງ, ພຣະອົງຊົງອວຍພອນພວກເຮົາ, ແລະພຣະອົງຊົງຈັດຕຽມທຸກສິ່ງທີ່ພວກເຮົາຕ້ອງການໄວ້ສຳລັບພວກເຮົາ) ໃຫ້ຂຽນປໂຍກນີ້ໃສ່ທາງຂ້າງຂອງກະດານ.
- ນຳພານັກຮຽນເຮັດລີສຂອງປະທານໃນຂໍ້ 6-8. ເນັ້ນເຖິງຂອງປະທານທີ່ພຣະເຈົ້າປະທານໃຫ້ ແລະພຣະອົງບໍ່ໄດ້ເອົາອອກໄປຈາກພວກເຮົາ, ພຣະອົງໃຫ້ພວກເຮົາໃຊ້ຂອງປະທານນັ້ນເພື່ອຊ່ອຍເຫລືອຊຶ່ງກັນ ແລະກັນ

(ເອເຟໂຊ 4:12)

- ບົດສົນທະນາປໂຍກສຸດທ້າຍ ຂອງຄຳວ່າ “ມາຕຖານຂອງຄວາມເຊື່ອຖື“ ຂໍ້ (6) ເພື່ອເນັ້ນໜັກມາຕຖານຂອງຄຣິສຕຽນສມັຍນີ້ໃຫ້ຢູ່ໃນຄວາມຊອບທັມຂອງພຣະເຈົ້າ. ບົດຮຽນວັນອາທິດຂອງພວກເຮົາຊ່ອຍໃຫ້ເຂົ້າໃຈໃນພຣະຄັມພີດີຂຶ້ນແນວໃດ?
- ທ່ານຄິດວ່າການຮັບໃຊ້, ການເອົາໃຫ້, ແລະສະແດງຄວາມເມດຕາເປັນຂອງຂວັນ ຫລືເປັນໜ້າທີ່ຮັບຜິດຊອບບໍ່?

<u>**ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະຄັມພີ:**</u> ໂຣມ 12:3-8

1. ໃນທາງໃດທີ່ທ່ານໄດ້ໃຊ້ເວລາໃຫ້ກັບຄົນອື່ນດ້ານຮ່າງກາຍໂດຍຄວາມເຊື່ອຂອງທ່ານ?
2. ເປັນເພາະເຫດໃດຄົນອື່ນຈຶ່ງຄິດວ່າເຂົາສູງສົ່ງກວ່າ ຫລືຕ່ຳກວ່າສັກສີຂອງເຂົາເຈົ້າໃນການງານຮັບໃຊ້ນີ້ທີ່ມີລາຍໄດ້ໃນຄອບຄົວ,ໃນເຮືອນຂອງເຂົາເຈົ້າ?
3. ພຣະຄຸນຂອງພຣະເຈົ້າຄືແນວໃດ? ພຣະຄຸນຂອງພຣະເຈົ້າທີ່ພຣະອົງໄດ້ຊົງປະທານໃຫ້ພວກເຮົາຜ່ານທາງພຣະເຢຊູຄຣິດນັ້ນມີຫຍັງແດ່?

3. <u>**ຈົ່ງເຮັດດີກັບທຸກຄົນ:**</u> (ໂຣມ 12:14-21)

- ໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານ ພຣະທັມ ໂຣມ 12:14-21
- ຄວາມຈິງຜູ້ທີ່ເຊື່ອທັງຫລາຍພຍາຍາມທຳຕາມການແນະນຳເຫລົ່ານີ້ ຫລືຖ້າຈະເບິ່ງຕາມລັກສະນະນິສັຍຂອງເຂົາເຈົ້າຢູ່ທາງນອກກໍແນະນຳໃຫ້ອວຍພອນຄົນອື່ນ ແລະບໍ່ໃຫ້ປ້ອຍດ່າເຂົາ: ເຊັ່ນມີຄົນຂັບຣົດຕັດໜ້າທ່ານທ່ານຈະເວົ້າແນວໃດ?
- ການໃຫ້ອະພັຍໄດ້ມີບົດບາດຕໍ່ຄວາມຮັກ ແລະຕອບສນອງແກ່ຜູ້ທີ່ກຽດຊັງພວກເຮົາຫຍັງແດ່?

<u>**ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະຄັມພີ:**</u> ໂຣມ 12:14-21

1. ໃນປໂຍກທີ່ວ່າ (ກອງຖ່ານໄຟແດງໄວ້ເທິງຫົວເຂົາ) ນັ້ນມີຄວາມໝາຍຢ່າງໃດ?
2. ເປັນຫຍັງພວກເຮົາຈຶ່ງຕ້ອງປະຕິເສດການຄິດອາຄາດບາດໝາງ ແລະມອບການນັ້ນໄວ້ກັບພຣະເຈົ້າ?
3. ຕາມຂໍ້ທີ (18) ນັ້ນເປັນໄປໄດ້ບໍ່ທີ່ຜູ້ທີ່ເຊື່ອທັງຫລາຍຈະດຳເນີນຊີວິດຢູ່ຢ່າງສງົບສຸກກັບຄົນທົ່ວໄປ?

<u>**ພຣະຄັມພີແຫ່ງຄວາມຈິງ**</u>

- ສິ່ງທີ່ຖືກຕ້ອງທີ່ສຸດກໍຄືການມອບຊີວິດໃຫ້ກັບພຣະເຈົ້ານັ້ນເປັນສິ່ງທີ່ດີສຳລັບບັນດາຜູ້ທີ່ເຊື່ອຊຶ່ງເປັນການຕອບສນອງພຣະເມດຕາກະຣຸນາທີ່ພຣະເຈົ້າຊົງປະທານໃຫ້ທາງພຣະຄຣິດ.
- ບັນດາຜູ້ທີ່ເຊື່ອຕ້ອງມີການຊັ່ງຊາຄຸນຄ່າໃຫ້ຖືກຕ້ອງເໝາະສົມ.
- ຄຣິສຕຽນທຸກຄົນຕ້ອງໃຫ້ມີຂອງຂວັນຝ່າຍວິນຍານຢ່າງນ້ອຍອັນນຶ່ງຄືຮັບໃຊ້ພຣະຜູ້ເປັນເຈົ້າດ້ວຍຄວາມຖ່ອມຕົວ.